Washington State Health Care Authority

# ຄວາມເປັນສ່ວນຕົວຂອງຂໍ້ມູນລູກຄ້າຂອງ Apple Health ຄໍາຖາມທີ່ພົບເລື້ອຍໆ

**ລູກຄ້າ Apple Health (Medicaid):** frequently asked questions (ໃຊ້ຄໍາຖາມທີ່ພົບເລື້ອຍໆເຫຼົ່ານີ້, FAQ) ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບຄວາມເປັນສ່ວນຕົວຂອງທ່ານ ແລະ ວິທີການແບ່ງປັນຂໍ້ມູນຂອງທ່ານ.

ສໍາລັບຂໍ້ມູນເພີ່ມເຕີມ, ກະລຸນາອ່ານ ປະກາດແຈ້ງການ ຫຼືເບິ່ງຄໍາຖາມທີ່ພົບເລື້ອຍໆຂອງພັນທະມິດ ແລະ ຊຸມຊົນ FAQ.

## ມີຫຍັງເກີດຂຶ້ນ?

The Health Care Authority (ໜ່ວຍງານທາງດ້ານການດູແລສຸຂະພາບ, HCA) ສົ່ງຂໍ້ມູນສ່ວນບຸກຄົນເຊັ່ນວ່າ ຊື່, ທີ່ຢູ່, ເບີໂທລະສັບ, ແລະ ບໍລິການດູແລສຸຂະພາບທີ່ທ່ານໄດ້ຮັບຈາກ Centers for Medicare and Medicaid Services, (ສູນບໍລິການ Medicare and Medicaid CMS) CMS ເປັນໜ່ວຍງານຂອງລັດຖະບານກາງທີ່ດໍາເນີນການ Medicaid.

HCA ເຊື່ອ ແຕ່ວ່າບໍ່ສາມາດຢືນຢັນໄດ້ວ່າຂໍ້ມູນນີ້ໄດ້ຮັບການແບ່ງປັນຫຼືບໍ່ກັບ Department of Homeland Security (ກົມຮັກສາຄວາມປອດໄພພາຍໃນ, DHS). HCA ຮັບຊາບເລື່ອງນີ້ຈາກ ຂ່າວທີ່ເຜີຍແຜ່ໃນເດືອນມິຖຸນາ, 13, 2025.

## ເປັນຫຍັງສິ່ງນີ້ຈຶ່ງເກີດຂຶ້ນ?

ຂ່າວດັ່ງກ່າວລະບຸວ່າ CMS ໄດ້ຮັບແຈ້ງໃຫ້ແຈ້ງຂໍ້ມູນເຫຼົ່ານີ້ແກ່ DHS ໂດຍຜູ້ນໍາຂອງ U.S. Department of Health and Human Services (ກະຊວງສາທາລະນະສຸກ ແລະ ບໍລິການມະນຸດຂອງສະຫະລັດອາເມລິກາ, HHS). HHS ດູແລໂຄງການດູແລສຸຂະພາບທົ່ວປະເທດຢ່າງຫຼວງຫຼາຍ, ແລະ CMS ເປັນສ່ວນໜຶ່ງຂອງ HHS.

## ຂໍ້ມູນສ່ວນບຸກຄົນຂອງໃຜແດ່ທີ່ຖືກແບ່ງປັນ?

HCA ສົ່ງຂໍ້ມູນໄປຫາ CMS ສໍາລັບຜູ້ລົງທະບຽນໃນໂຄງການ Apple Health ທີ່ໄດ້ຮັບເງິນທຶນຈາກລັດຖະບານກາງ. ເຊິ່ງລວມເຖິງການຂະຫຍາຍ Apple Health ອີກດ້ວຍ.

ປັດຈຸບັນນີ້, ພວກເຮົາບໍ່ຮູ້ຢ່າງແຈ້ງວ່າ CMS ໄດ້ແບ່ງປັນກັບ DHS. ພວກເຮົາກັງວົນວ່າ DHS ອາດມີຂໍ້ມູນສ່ວນບຸກຄົນກ່ຽວກັບຄົນສ່ວນຫຼາຍທີ່ໃຊ້ Apple Health (Medicaid).

## ຂ້າພະເຈົ້າສາມາດປົກປ້ອງຂໍ້ມູນຂອງຂ້າພະເຈົ້າໄດ້ໂດຍການຍົກເລີກ Apple Health ຫຼືບໍ່?

ບໍ່, ການຍົກເລີກຄວາມຄຸ້ມຄອງ Apple Health ຂອງທ່ານໃນປະຈຸບັນນີ້ຈະບໍ່ນໍາຂໍ້ມູນທີ່ແບ່ງປັນັບຄືນມາກັບ CMS.

ທຸກໆລັດຈໍາເປັນຕ້ອງແບ່ງປັນຂໍ້ມູນນີ້ກັບລັດຖະບານກາງມາເປັນເວລາຫຼາຍປີແລ້ວ.

## ຍ້ອນຫຍັງ HCA ຈຶ່ງແບ່ງປັນຂໍ້ມູນຂອງຂ້າພະເຈົ້າກັບ CMS?

ລັດຖະບານກາງໃຫ້ເງິນແກ່ລັດເພື່ອຊ່ວຍຈ່າຍຄ່າ Apple Health (Medicaid). ເພື່ອຮັບເງິນນີ້ HCA ຈໍາເປັນຕ້ອງແບ່ງປັນຂໍ້ມູນຕາມກົດໝາຍກັບ CMS.

## ຂ້າພະເຈົ້າມີການຄຸ້ມຄອງການຂະຫຍາຍ Apple Health. ຂໍ້ມູນຂອງຂ້າພະເຈົ້າຖືກແບ່ງປັນຫຼືບໍ່?

ແມ່ນ. ຖ້າວ່າທ່ານລົງທະບຽນການຂະຫຍາຍ Apple Health, ຂໍ້ມູນຂອງທ່ານຈະຖືກແບ່ງປັນກັບ CMS. ເຖິງແມ່ນວ່າການບໍລິການການຂະຫຍາຍ Apple Health ສ່ວນຫຼາຍຈະໄດ້ຮັບການສະໜັບສະໜູນຈາກລັດ, ເງິນຂອງລັດຖະບານກາງຈະຖືກນໍາໄປໃຊ້ສໍາລັບການເຂົ້າຮັກສາພະຍາບານສຸກເສີນ.

### ສະຖານະ ການຍ້າຍຖິ່ນຖານຂອງຂ້າພະເຈົ້າຖືກແບ່ງປັນຫຼືບໍ່ກັບ CMS?

HCA ບໍ່ໄດ້ລາຍງານຂໍ້ມູນສະຖານະການເຂົ້າເມືອງທີ່ລະອຽດສະເພາະບຸກຄົນ ໃຫ້ກັບ CMS. ສໍາລັບຜູ້ທີ່ລົງທະບຽນໃນ Apple Health Expansion, ສະຖານະການເຂົ້າເມືອງຂອງເກືອບທຸກຄົນໄດ້ຖືກລາຍງານວ່າເປັນ:

- ຜູ້ທີ່ບໍ່ແມ່ນພົນລະເມືອງທີ່ມີຄຸນສົມບັດ', ຊຶ່ງໝາຍເຖິງບຸກຄົນທີ່ບໍ່ແມ່ນພົນລະເມືອງ, ຜູ້ທີ່ໄດ້ຮັບການອະນຸມັດສະຖານະການເຂົ້າເມືອງສະເພາະ, ຫຼື
- ຜູ້ໄດ້ຮັບການບໍລິການສຸກເສີນ, ໝາຍຄວາມວ່າທ່ານມີສິດໄດ້ຮັບການບໍລິການສຸກເສີນພາຍໃຕ້ໂຄງການການແພດສຸກເສີນສໍາລັບຄົນຕ່າງດ້າວ, ຫຼື
- ຖືກລະບຸວ່າ 'ອື່ນໆ', ໝາຍຄວາມວ່າບໍ່ມີປະເພດອື່ນທີ່ອະທິບາຍສະຖານະການເຂົ້າເມືອງຂອງທ່ານໄດ້.

### ຂໍ້ມູນນີ້ຈະຖືກໃຊ້ຄືແນວໃດໂດຍ DHS?

ພວກເຮົາບໍ່ສາມາດຮັບຊາບວ່າຂໍ້ມູນ ການຍ້າຍຖິ່ນຖານຈະຖືກນໍາໄປໃຊ້ຄືແນວໃດ. ພວກເຮົາກັງວົນວ່າມັນອາດຈະຖືກນໍາໄປໃຊ້ໃນການບັງຄັບກົດໝາຍກວດຄົນເຂົ້າເມືອງ.

## ຂ້າພະເຈົ້າຄວນເຮັດແນວໃດຖ້າວ່າ DHS ໃຊ້ຂໍ້ມູນຂອງຂ້າພະເຈົ້າເພື່ອບັງຄັບໃຊ້ຂໍ້ມູນຂອງຂ້າພະເຈົ້າເພື່ອບັງຄັບໃຊ້ກົດໝາຍກວດຄົນເຂົ້າເມືອງ?

ຖ້າວ່າທ່ານກັງວົນກ່ຽວກັບການບັງຄັບໃຊ້ກົດໝາຍກວດຄົນເຂົ້າເມືອງ, ກະລຸນາເຂົ້າໄປທີ່ເວັບເພຈຂອງສໍານັກງານລັດໄອຍະການສູງສຸດແຫ່ງລັດ Washington ຮູ້ສິດທິຂອງທ່ານ: ເພື່ອຮັບຮູ້ສິດທິຂອງທ່ານ.

ເວັບໄຊນີ້ມີຂໍ້ມູນທີ່ຊ່ວຍໃຫ້ທ່ານກຽມຕົວໄດ້ຖ້າວ່າຖືກຕິດຕໍ່ໂດຍພະນັກງານທີ່ບັງຄັບໃຊ້ກົດໝາຍກວດຄົນເຂົ້າເມືອງ. ທ່ານສາມາດແປ ເວັບໄຊ້ເປັນພາສາຕ່າງໆຢ່າງຫຼວງຫຼາຍໂດຍໃຊ້ເຄື່ອງມືທາງດ້ານຊ້າຍຂອງໜ້າຈໍ ຫຼື ເບິ່ງຈຸ້ນພະຍາກອນຮູ້ສິດທິຂອງທ່ານ ທີ່ແປແລ້ວໄດທີ່ໜ້າ 3.

## ຂ້າພະເຈົ້າສາມາດເລືອກທີ່ຈະບໍ່ແບ່ງປັນຂໍ້ມູນຂອງຂ້າພະເຈົ້າກັບລັດຖະບານກາງໄດ້ ຫຼືບໍ່?

ບໍ່. ຖ້າວ່າທ່ານມີການຄຸ້ມຄອງ Apple Health ທາງ HCA ຈະແບ່ງປັນຂໍ້ມູນຂອງທ່ານກັບລັດຖະບານກາງ. ສິ່ງນີ້ເປັນສິ່ງທີ່ກົດໝາຍກໍານົດ. ທ່ານບໍ່ສາມາດເລືອກຍົກເລີກໄດ້.

ທ່ານສາມາດເລືອກທີ່ຈະຍົກເລີກຄວາມຄຸ້ມຄອງ Apple Health ຂອງທ່ານໄດ້ຕະຫຼອດເວລາ. ຮຽນຮູ້ວິທີການຍົກເລີກຄວາມຄຸ້ມຄອງຂອງທ່ານທາງອອນລາຍ. ການຍົກເລີກຄວາມຄຸ້ມຄອງ Apple Health ຂອງທ່ານໃນປະຈຸບັນນີ້ຈະບໍ່ນໍາຂໍ້ມູນທີ່ແບ່ງປັນໄປແລ້ວກັບຄືນມາກັບ CMS.

## ຂ້າພະເຈົ້າຈະຮັບຊາບໄດ້ຢ່າງໃດວ່າຂໍ້ມູນຂອງທ່ານຖືກແບ່ງປັນ ຫຼືບໍ່?

ຖ້າວ່າທ່ານລົງທະບຽນໃນ Apple Health ຫຼື ເຄີຍລົງທະບຽນມາກ່ອນ, ຂໍ້ມູນຂອງທ່ານຈະຖືກແບ່ງປັນກັບ CMS, ຕາມທີ່ຈໍາເປັນ.

ເຊິ່ງລວມເຖິງບຸກຄົນທີ່ຢູ່ໃນລາບຊື່ ລົງທະບຽນ ຫຼື ຢູ່ໃນລາຍຊື່ລໍຖ້າສໍາລັບການຂະຫຍາຍ Apple Health ທີ່ໄດ້ຮັບການດູແລຜ່ານໂຄງການ Apple Health ອື່ນໆ.

ຂໍ້ມູນຂອງທ່ານຈະບໍ່ຖືກແບ່ງປັນຖ້າວ່າທ່ານສະໝັກ Apple Health ແຕ່ວ່າຖືກປະຕິເສດ ແລະ ບໍ່ເຄີຍລົງທະບຽນ.

## ຂ້າພະເຈົ້າມີທາງເລືອກຫຍັງແດ່ສຳລັບຄວາມຄຸ້ມຄອງດ້ານການດູແລສຸຂະພາບຖ້າວ່າຂ້າພະເຈົ້າ ຍົກເລີກ Apple Health?

ຖ້າວ່າທ່ານໄປໂຮງໝໍ, ທ່ານອາດມີສິດໄດ້ຮັບຄວາມຊ່ວຍເຫຼືອໃນການຊໍາລະຄ່າຮັກສາພະຍາບານຜ່ານ ກົດໝາຍການດູແລສຸຂະພາບຂອງລັດ Washington. ທ່ານຍັງສາມາດຮັບການດູແລຟຣີ ຫຼື ຫຼຸດລາຄາໄດ້ທີ່ຄຼີນິກຟຣີ ຫຼື ສູນສຸຂະພາບຊຸມຊົນ.

## ຂ້າພະເຈົ້າຈະປ່ຽນທີ່ຢູ່ ຫຼື ໝາຍເລກໂທລະສັບຂອງຂ້າພະເຈົ້າໄດ້ຄືແນວໃດ?

ໄປທີ່ hca.wa.gov/report-a-change ເພື່ອຮັບຮູ້ວິທີອັບເດດຂໍ້ມູນຕິດຕໍ່ຂອງທ່ານ. ຄໍາແນະນໍາມີໃຫ້ບໍລິການ ໃນຫຼາຍພາສາ.

HCA ອັບເດດການປ່ຽນແປງທີ່ຢູ່ທຸກເດືອນ. ເນື່ອງຈາກວ່າພວກເຮົາຕ້ອງສົ່ງ ໄຟລ໌ ປະຈໍາເດືອນໄປຍັງ CMS, ຂໍ້ມູນທີ່ຢູ່ທີ່ອັບເດດຈະຖືກສົ່ງໄປຍັງ CMS ຫຼັງຈາກການອັບເດດແລ້ວ. CMS ຮັກສາຂໍ້ມູນທີ່ຜ່ານມາທັງໝົດ. ເຊິ່ງໝາຍຄວາມວ່າພວກເຂົາຈະຍັງສາມາດເຂົ້າເຖິງລາຍລະອຽດການຕິດຕໍ່ເກົ່າ ແລະ ໃໝ່ຂອງທ່ານໄດ້.

## ລັດປົກປ້ອງຂໍ້ມູນຂອງຂ້າພະເຈົ້າຄືແນວໃດ?

ກົດໝາຍຂອງລັດ ແລະ ຂອງລັດຖະບານກາງກຳນົດໃຫ້ HCA ຕ້ອງໃຊ້ ຫຼື ແບ່ງປັນຂໍ້ມູນສະເພາະສຸຂະພາບ ຂອງທ່ານເມື່ອມີເຫດຜົນບາງປະການເທົ່ານັ້ນ.

HCA ກໍາລັງດໍາເນີນການເພື່ອຈໍາກັດປະລິມານຂໍ້ມູນທີ່ຖືກແບ່ງປັນ. ຕົວຢ່າງ, ພວກເຮົາຈະບໍ່ແບ່ງປັນຂໍ້ມູນ ບໍລິການທາງການແພດ (ເອີ້ນອີກຢ່າງໜຶ່ງວ່າ ຂໍ້ຮຽກຮ້ອງຄ່າທົດແທນ) ສ່ວນຫຼາຍສໍາລັບຜູ້ທີ່ລົງທະບຽນໃນການຂະຫຍາຍ Apple Health. ພວກເຮົາຍັງຈໍາເປັນຕ້ອງແບ່ງປັນຂໍ້ມູນການລົງທະບຽນໃນການຂະຫຍາຍ Apple Health ຄືກັນກັບຂໍ້ມູນການຂໍຮັບບໍລິການສຸກເສີນທີ່ໄດ້ຮັບ ການບົ່ມບົວມະເຮັງ ຫຼື ການຟອກໄຕ ຫຼື ການບົ່ມບົວຫຼັງ ຈາກການປູກຖ່າຍ. ບໍລິການເຫຼົ່ານີ້ໄດ້ຮັບການສະໜັບສະໜູນຈາກເງິນທຶນຂອງລັດຖະບານກາງ, ດັ່ງນັ້ນ HCA ຈຶ່ງຍັງຕ້ອງລາຍງານບໍລິການເຫຼົ່ານີ້.

HCA ກໍາລັງຊອກຫາວິທີການທີ່ດີກວ່າໃນການດູແລຜູ້ຄົນຕາມທີ່ພວກເຂົາຕ້ອງການໃນຂະນະທີ່ຕ້ອງແບ່ງປັນຂໍ້ ມູນນ້ອຍລົງ. ພວກເຮົາກໍາລັງເຮັດວຽກຮ່ວມກັບສໍານັກງານຜູ້ວ່າການ ແລະ ພັນທະມິດອື່ນໆເພື່ອເຮັດການ ປ່ຽນແປງໂດຍໄວທີ່ສຸດ.

## ຂ້າພະເຈົ້າຍັງຄວນໄປພົບແພດ ຫຼື ໄປຮັບຢາຕາມໃບສັ່ງແພດ ຫຼືບໍ່?

ແມ່ນ. ການໄດ້ຮັບການດູແລທີ່ຈໍາເປັນຢ່າງຕໍ່ເນື່ອງຖືເປັນສິ່ງສໍາຄັນ. ພວກເຮົາຕ້ອງການໃຫ້ທ່ານຮູ້ສຶກປອດ ໄພໃນການໄດ້ຮັບການດູແລທີ່ທ່ານຕ້ອງການ. ພວກເຮົາກໍາລັງເຮັດວຽກຮ່ວມກັບຊຸມຊົນຜູ້ໃຫ້ບໍລິການ ເພື່ອຊ່ວຍໃຫ້ພວກເຂົາເຂົ້າໃຈສິດທິຂອງທ່ານ ແລະ ໃຫ້ການດູແລສຸຂະພາບທີ່ປອດໄພ ແລະ ເຂົ້າເຖິງໄດ້ ແກ່ທຸກໆຄົນຕໍ່ໄປໃນ Washington.

## ຂ້າພະເຈົ້າສາມາດຕິດຕໍ່ໃຜໄດ້ແດ່ຖ້າວ່າມີຄໍາຖາມ ຫຼື ຂໍ້ກັງວົນກ່ຽວກັບຄວາມເປັນສ່ວນຕົວຂອງຂ້າພະເຈົ້າ?

### ສະຫວັດດີການສາທາລະນະ ແລະ ການຍ້າຍຖິ່ນຖານ

**ຖ້າວ່າທ່ານກັງວົນວ່າການໃຊ້ສະຫວັດດີການຂອງລັດລະຫວ່າງຈະສົ່ງຜົນຕໍ່ທ່ານຄືແນວໃດ,** ກະລຸນາເວົ້າກັບທະນາຍຄວາມດ້ານການຍ້າຍຖິ່ນຖານ. ທ່ານສາມາດຄົ້ນຫາຄວາມຊ່ວຍເຫຼືອທາງກົດໝາຍຟຣີ ຫຼື ມີຄ່າໃຊ້ຈ່າຍຕໍ່າໃນ Washington ໄດ້ທີ່ immigrationlawhelp.org. ເວັບໄຊນີ້ຊ່ວຍເຫຼືອຜູ້ອົບພະຍົບ ທີ່ມີລາຍໄດ້ນ້ອຍໃນການຄົ້ນຫາການສະໜັບສະໜູນທາງກົດໝາຍທີ່ເຊື່ອຖືໄດ້.

ຖ້າວ່າຕ້ອງການຂໍ້ມູນເພີ່ມເຕີມວ່າດ້ວຍສະຫວັດດີການສາທາລະນະອາດສົ່ງຜົນຕໍ່ສະຖານະການຍ້າຍຖິ່ນຖານຂອງທ່ານຄືແ ນວໃດ, ກະລຸນາໄປທີ່ USCIS ຂະບວນການ ແລະ ຂັ້ນຕອນການຮຽກເກັບເງິນສາທາລະນະ.

**ຮູ້ສິດທິຂອງທ່ານ**

ຖ້າວ່າທ່ານກັງວົນກ່ຽວກັບ DHS ຈະມີຂໍ້ມູນຂອງທ່ານ, ກະລຸນາໄປທີ່ສໍານັກງານໄອຍະການສູງສຸດແຫ່ງລັດ Washington ຮູ້ສິດທິຂອງທ່ານ: ການບັງຄັບໃຊ້ກົດໝາຍກວດຄົນເຂົ້າເມືອງໃນ Washington ເວັບເພຈ.

ຄລິກພາສາຕ່າງໆທາງລຸ່ມນີ້ເພື່ອເບິ່ງແຫຼ່ງຂໍ້ມູນທີ່ແປແລ້ວ.

Amharic | Arabic | Chinese (Simplified) | Chinese (traditional) | German | Hindi | Japanese | Khmer | Korean | Marshallese | Punjabi | Russian | Samoan | Somali | Spanish | Tagalog | Ukrainian | Vietnamese

## ຂ້າພະເຈົ້າສາມາດຮັບຂໍ້ມູນເພີ່ມເຕີມໄດ້ຈາກບ່ອນໃດ?

ຖ້າວ່າທ່ານຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບວິທີການໄດ້ທີ່ HCA ປົກປ້ອງຂໍ້ມູນຂອງທ່ານ, ກະລຸນາໄປທີ່ hca.wa.gov/apple-health-privacy.